**ມິຊຊາອາທິດທີ 6 ການົດທຳມະດາປີ B**

**ວັນທີ 14 ກຸມພາ 2021**



**ພຣະວໍຣະສານໂດຍນັກບຸນມັກໂກ 1, 40-45**

ມື້ໜຶ່ງ, ຄົນຂີ້ທູດຜູ້ໜຶ່ງມາຫາພຣະເຢຊູເຈົ້າແລະຂາບທູນວ່າ: "ຖ້າພຣະອົງພໍພຣະໄທ, ພຣະອົງກໍທຳໃຫ້ຂ້ານ້ອຍຫາຍດີໄດ້". ພຣະອົງຮູ້ສຶກສົງສານເຂົາ, ຈຶ່ງຍື່ນພຣະຫັດຈັບບາຍແລະກ່າວວ່າ: "ເຮົາພໍໃຈ, ຈົ່ງຫາຍດີເຖີດ". ທັນທີຂີ້ທູດກໍຫາຍສູນໄປແລະຄົນນັ້ນກໍດີພະຍາດ. ແລ້ວພຣະອົງກໍບອກເຂົາກັບໄປ ພ້ອມສັ່ງຫ້າມເຂົາຢ່າງເຄັ່ງຄັດວ່າ: "ລະວັງຢ່າບອກໃຜໝົດ, ແຕ່ໃຫ້ໄປສະເໜີຕົວຕໍ່ພຣະສົງ,ແລະຖະຫວາຍຂອງບູຊາຕາມທີ່ທ່ານໂມແຊໄດ້ກຳໜົດໄວ້ ເພື່ອເປັນຫລັກຖານຢືນຢັນແກ່ພວກເຂົາ". ພໍແຕ່ໄປຫວິດ, ຄົນນັ້ນກໍຮ້ອງປ່າວປະກາດຂ່າວນັ້ນ ຈົນພຣະເຢຊູເຈົ້າສະເດັດເຂົ້າເມືອງຢ່າງເປີດເຜີຍບໍ່ໄດ້. ພຣະອົງຈຶ່ງປະທັບເຊົາຢູ່ບ່ອນສອກຫລີກນອກເມືອງ. ແຕ່ຄົນຈາກທຸກທິດທຸກທາງກໍພາກັນຫລັ່ງໄຫລມາຫາພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 1, 40-45**

ວາຈາພຣະເຈົ້າວັນນີ້ ໃນບົດອ່ານທີໜຶ່ງຈາກໜັງສືສັງຄະຈາຣີດໄດ້ອະທິບາຍໃຫ້ພວກເຮົາເຂົ້າໃຈເຖິງຄວາມຫຍຸ້ງຍາກຂອງຜູ້ເປັນພະຍາດຂີ້ທູດໃນການດຳລົງຊີວິດໃນສັງຄົມກໍຄືໃນຊີວິດຄວາມເຊື່ອ. ຄົນໃນສັງຄົມສະໄໝນັ້ນຖືວ່າຄົນເປັນຂີ້ທູດແມ່ນຄົນມີມົນທິນ, ເປັນຄົນເປື້ອນໝອງ. ເຂົາຕ້ອງຢູ່ຫ່າງໄກຈາກຄົນອື່ນເພື່ອບໍ່ໃຫ້ຄົນອື່ນຕິດພະຍາດນຳເຂົາ. ແລະຄົນຂີ້ທູດນີ້ບໍ່ມີສິດເຂົ້າໃນພຣະວິຫານເພື່ອປະຕິບັດກິດຈະສັດທາ ຍ້ອນເຂົາເປັນຄົນເປື້ອນໝອງສ່ວນພຣະວິຫານເປັນສະຖານທີ່ບໍລິສຸດ. ຊີວິດຂອງເຂົາບໍ່ພຽງແຕ່ເຈັບປວດທໍລະມານຝ່າຍຜິວໜັງແຕ່ຍິ່ງໄປກວ່ານັ້ນອີກແມ່ນຝ່າຍຈິດໃຈ. ເຂົາປຽບເໝືອນຄົນທີ່ຕາຍທັງເປັນ. ຕາມທຳມະດາແລ້ວ, ຄົນທີ່ເປັນພະຍາດຂີ້ທູດຕ້ອງໄປສະເໜີຕົວຕໍ່ພຣະສົງ ເພື່ອພຣະສົງຈະໄດ້ປະກາດໃຫ້ທຸກຄົນຮູ້ວ່າຄົນຜູ້ນີ້ເປັນຄົນເປື້ອນໝອງ. ແລະເມື່ອໃດຄົນຂີ້ທູດຫາຍດີຈາກພະຍາດເຂົາກໍຕ້ອງກັບມາສະເໜີຕົວຕໍ່ພຣະສົງອີກຄັ້ງເພື່ອໃຫ້ພຣະສົງປະກາດໃຫ້ທຸກຄົນຮູ້ວ່າຄົນຜູ້ນັ້ນສາມາດກັບເຂົ້າມາດຳລົງຊີວິດຮ່ວມກັບຄົນອື່ນແລະມີສິດປະຕິບັດກິດຈະສັດທາໃນພຣະວິຫານໄດ້.

ສ່ວນໃນພຣະວໍລະສານວັນນີ້, ກໍມີຄົນຂີ້ທູດຄົນໜຶ່ງມາວອນຂໍໃຫ້ພຣະເຢຊູເຈົ້າປິ່ນປົວເຂົາໃຫ້ດີຫາຍ. ວິທີການປິ່ນປົວຄົນຂີ້ທູດຂອງພຣະເຢຊູເຈົ້າທຳໃຫ້ຄົນໃນສະໄໝນັ້ນມີຄວາມປະຫລາດໃຈ. ຍ້ອນພຣະອົງຍື່ນພຣະຫັດຈັບບາຍຄົນຂີ້ທູດ. ຕາມທຳມະດາແລ້ວຫາກຄົນໃດຈັບບາຍຄົນຂີ້ທູດ, ຜູ້ນັ້ນກໍຈະຕິດພະຍາດຈາກເຂົາແລະກາຍເປັນຄົນເປື້ອນໝອງ. ສ່ວນພຣະເຢຊູເຈົ້າ, ພຣະອົງບໍ່ພຽງແຕ່ບໍ່ຕິດພະຍາດຂີ້ທູດແລະບໍ່ກາຍເປັນຄົນເປື້ອນໝອງແຕ່ພຣະອົງຍັງທຳໃຫ້ຄົນເປັນຂີ້ທູດດີຫາຍຈາກພະຍາດອີກດ້ວຍ. ຈາກນັ້ນ, ພຣະເຢຊູເຈົ້າກໍບອກໃຫ້ຄົນຂີ້ທູດດີພະຍາດນີ້ໄປສະເໜີຕົວຕໍ່ພຣະສົງເພື່ອໃຫ້ທຸກຄົນຮູ້ວ່າເຂົາໄດ້ຫາຍດີຈາກພະຍາດແລ້ວແລະມີສິດກັບເຂົ້າສູ່ສັງຄົມແລະໃນພຣະວິຫານເພື່ອສັນລະເສີນພຣະເຈົ້າ.

ສິ່ງທີ່ກ່າວມານີ້ສະທ້ອນໃຫ້ເຫັນວ່າ, ພຣະເຢຊູເຈົ້າມາໃນໂລກນີ້ເພື່ອທຳໃຫ້ຄົນທີ່ຢູ່ຂອບສັງຄົມ, ຄົນທີ່ຖືກປະຖິ້ມ, ຄົນທີ່ເປື້ອນໝອງກັບເຂົ້າມາມີຊີວິດຮ່ວມກັບຄົນອື່ນ, ມີບົດບາດໃນສັງຄົມກໍຄືດ້ານຄວາມເຊື່ອ. ຍ້ອນພຣະເຢຊູເຈົ້າມາເພື່ອຊອກຫາແກະທີ່ຕົກເຮ່ຍເສຍຫາຍໄປ. ແລະຕົວໃດບາດເຈັບຫລືມີພະຍາດພຣະອົງກໍປິ່ນປົວໃຫ້ດີຫາຍແລະນຳເຂົ້າສູ່ຝູງແກະຂອງພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ລູກຂໍຂອບພຣະຄຸນພຣະອົງສຳລັບຄວາມຮັກເມດຕາທີ່ພຣະອົງມີຕໍ່ລູກຜູ້ເປັນຄົນບາບ, ຄົນເປື້ອນໝອງ. ໂຜດປິ່ນປົວພະຍາດຂີ້ທູດໃນດວງໃຈລູກໃຫ້ດີຫາຍ ເພື່ອລູກຈະໄດ້ກັບມາຄືນດີກັບພຣະອົງແລະກັບຄົນອື່ນໃນຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ